ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການແລະກິລາ
ຫ້ອງການ

ເລກທີ 5200---- /ຫກ

ນະຄອນຫລວງວຽງຈັນ, ວັນທີ 8 ພະຈິກ 2023

# ແຈ້ງການ

ຮຽນ: - ທ່ານ ຫົວໜ້າຫ້ອງການ, ກົມ, ສະຖາບັນ, ອົງການທຽບເທົ່າກົມ, ສູນ;
- ທ່ານ ອະທິການບໍດີມະຫາວິທະຍາໄລ 4 ແຫ່ງ;
- ທ່ານ ຫົວໜ້າຫ້ອງການກຳມາທິການສຶກສາສົງສູນກາງ;
- ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;
- ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ;
- ທ່ານ ຜູ້ບໍລິຫານສະຖານການສຶກສາທັງພາກລັດ ແລະ ເອກະຊົນໃນຂອບເຂດທົ່ວປະເທດ.

ເລື່ອງ: ຈັດຕັ້ງປະຕິບັດການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ.

- ອີງຕາມ ຂໍ້ຕົກລົງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການສ້າງກົມກອງ, ສະຖານການສຶກສາ ແລະ ກິລາປອດຢາເສບຕິດ ສະບັບເລກທີ 3536/ສສກ, ລົງວັນທີ 26 ກໍລະກົດ 2023.

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອໃຫ້ການຈັດຕັ້ງປະຕິບັດການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ໃນຂະແໜງການສຶກສາທິການ ແລະ ກິລາ ໃຫ້ມີຄວາມເປັນເອກະພາບ ແລະ ສາມາດຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ຫ້ອງການກະຊວງສຶກສາທິການ ແລະ ກິລາ ອອກແຈ້ງການແນະນຳມາຍັງຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນທັງພາກລັດ ແລະ ເອກະຊົນ ດັ່ງນີ້:

1. ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນໃນຂະແໜງການສຶກສາທິການ ແລະ ກິລາ ທັງພາກລັດ ແລະ ເອກະຊົນ ຕ້ອງປະຕິບັດຕາມຫຼັກການ, ວິທີການ, ຂັ້ນຕອນ ໃນການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດໃຫ້ຖືກຕ້ອງຕາມມາດຕະຖານ ທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 3536/ສສກ, ລົງວັນທີ 26 ກໍລະກົດ 2023 ຢ່າງເຂັ້ມງວດ;
2. ແຕ່ງຕັ້ງຄະນະຮັບຜິດຊອບວຽກງານສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດໃນຂົງເຂດຄວາມຮັບຜິດຊອບຂອງຕົນ;
3. ຄົ້ນຄວ້າ ແລະ ກຳແໜ້ນເນື້ອໃນຂໍ້ຕົກລົງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດໃຫ້ເປັນແຜນປະຕິບັດລະອຽດຂອງພາກສ່ວນຕົນ (ກົມກອງສ້າງເປັນແຜນປະຈຳປີ, ສະຖານການສຶກສາສ້າງເປັນແຜນສົກຮຽນ);

สแกนด้วย CamScanner

4. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນ ການສ້າງກົມກອງ, ສະຖານການສຶກສາ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ (ກົມກອງທຸກໆປີ, ສະຖານການສຶກສາທຸກໆສົກຮຽນ) ໂດຍນໍາໃຊ້ເຄື່ອງມືປະເມີນ ທີ່ ກະຊວງສຶກສາ ທິການ ແລະ ກິລາ ໄດ້ກໍານົດໄວ້;
5. ມອບໃຫ້ຄະນະຮັບຜິດຊອບແຕ່ລະຂັ້ນຈັດຕັ້ງການປະເມີນ, ສະຫຼຸບລາຍງານ ໃຫ້ຄະນະຮັບຜິດຊອບຕາມຂັ້ນຄຸ້ມຄອງຂອງຕົນ ພິຈາລະນາ, ຄົ້ນຄ້ວາຕາມລະບຽບການ ເພື່ອອອກຂໍ້ຕົກລົງ, ໃບຢັ້ງຢືນຮັບຮອງ ແລະ ຈັດຕັ້ງການຍ້ອງຍໍ;
6. ພາຍຫຼັງສໍາເລັດການຈັດຕັ້ງປະຕິບັດການສ້າງກົມກອງ, ສະຖານການສຶກສາ ແລະ ກິລາ ປອດຢາເສບຕິດ ປະຈໍາປີ ປະຈໍາສົກຮຽນ ໃຫ້ລາຍງານມາຍັງ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ (ກົມກອງ ສົ່ງກ່ອນວັນທີ 15 ທັນວາ ຂອງທຸກໆປີ, ສະຖານການສຶກສາ ສົ່ງກ່ອນວັນທີ 15 ສິງຫາ ຂອງທຸກໆປີ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ.

ເຊັນແທນ. ຫົວໜ້າຫ້ອງການ

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ພົນມະແສງ ທິບພະວົງ

ຕິດຕໍ່ພົວພັນ:
ນາງ ສີລິວັນ ແສງຫາລາດ 020 5558 6246

สแกนด้วย CamScanner